ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 625 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 22.10.2021

# ດຳລັດ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ມະຕິ ຂອງສະພາແຫ່ງຊາດວ່າດ້ວຍ ການຮັບຮອງເອົາໂຄງປະກອບກົງຈັກລັດຖະບານ ແລະ ສະມາຊິກລັດຖະບານ ສະບັບເລກທີ 09/ສພຊ, ລົງວັນທີ 22 ມີນາ 2021;
- ອີງຕາມ ໜັງສືສະເໜີຂອງກະຊວງພາຍໃນ ສະບັບເລກທີ 223/ພນ, ລົງວັນທີ 20 ກັນຍາ 2021.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ປະຕິບັດກົດໝາຍ ແລະ ລະບຽບການຂອງລັດໃນການຄຸ້ມຄອງ ແລະ ພັດທະນາວຽກງານຂອງຂະແໜງເຕັກໂນໂລຊີ ແລະ ການສື່ສານ ໃນຂອບເຂດທົ່ວປະເທດ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ຂຽນເປັນຕົວອັກສອນຫຍໍ້ວ່າ **"ກຕສ"** ຂຽນເປັນພາສາອັງກິດ "Ministry of Technology and Communications" "MTC" ແມ່ນກົງຈັກໜຶ່ງຂອງລັດຖະບານ, ມີພາລະບົດບາດ ເປັນເສນາທິການໃຫ້ແກ່ລັດຖະບານໃນການຄຸ້ມຄອງມະຫາພາກກ່ຽວກັບວຽກງານເຕັກໂນໂລຊີ, ນະວັດຕະກຳ, ໂທລະຄົມມະນາຄົມ, ອິນເຕີເນັດ, ໄປສະນີ ແລະ ຄວາມປອດໄພໄຊເບີ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ໜ້າທີ່ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານມີດັ່ງນີ້:

1. ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດ, ລັດຖະບັນຍັດຂອງປະທານປະເທດ, ດຳລັດ, ມະຕິ ແລະ ນິຕິກຳຂອງລັດຖະບານ ແລະ ນາຍົກລັດຖະມົນຕີ;
2. ຄົ້ນຄວ້າຫັນເອົາແນວທາງນະໂຍບາຍຂອງພັກ, ນະໂຍບາຍ, ຍຸດທະສາດ, ແຜນການ ແລະ ມະຕິຕົກລົງຂອງລັດຖະບານ ກ່ຽວກັບວຽກງານເຕັກໂນໂລຊີ ແລະ ການສື່ສານ ມາເປັນແຜນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການລະອຽດຂອງຂະແໜງຂອງຕົນ ພ້ອມທັງຮັບຜິດຊອບໃນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ ແລະ ປະກົດຜົນເປັນຈິງ;
3. ຄົ້ນຄວ້າຮ່າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳຂອງຂະແໜງເຕັກໂນໂລຊີ ແລະ ການສື່ສານ ເພື່ອສະເໜີຕໍ່ລັດຖະບານ;
4. ສ້າງ, ປັບປຸງພື້ນຖານໂຄງລ່າງດ້ານເຕັກໂນໂລຊີ ແລະ ການສື່ສານ ໃນຂອບເຂດທົ່ວປະເທດ ເພື່ອເປັນສິ່ງອຳນວຍຄວາມສະດວກ ໃນການເຄື່ອນໄຫວວຽກງານເຕັກໂນໂລຊີ, ນະວັດຕະກຳ, ໂທລະຄົມມະນາຄົມ, ອິນເຕີເນັດ, ໄປສະນີ ແລະ ຄວາມປອດໄພໄຊເບີ;
5. ຄຸ້ມຄອງ ແລະ ກົດລົມ ເຄືອຂ່າຍການສື່ສານ, ອັດຕາຄ່າທຳນຽມ, ອັດຕາຄ່າບໍລິການ, ການດຳເນີນທຸລະກິດທາງດ້ານເຕັກໂນໂລຊີ, ໂທລະຄົມມະນາຄົມ, ອິນເຕີເນັດ, ການສື່ສານຜ່ານດາວທຽມ ແລະ ໄປສະນີ ໃຫ້ມີການຂະຫຍາຍເຄືອຂ່າຍການບໍລິການຢ່າງທົ່ວເຖິງ ແລະ ລົງສູ່ເຂດຫ່າງໄກສອກຫຼີກ ຫລື ເຂດບູລິມະສິດຂອງລັດຖະບານ ພ້ອມທັງຮັບປະກັນດ້ານຄຸນນະພາບ ແລະ ລາຄາທີ່ເໝາະສົມ;
6. ຄົ້ນຄ້ວາສ້າງ ແລະ ກຳນົດມາດຕະຖານ, ກວດກາ ແລະ ຕິດຕາມຄຸນນະພາບ ຂອງອຸປະກອນໂທລະຄົມມະນາຄົມ, ລະບົບການບໍລິການໄປສະນີ, ລະບົບໂທລະຄົມມະນາຄົມ, ລະບົບອິນເຕີເນັດ, ລະບົບການບໍລິຫານລັດດີຈິຕອນ ແລະ ບັນດາລະບົບການບໍລິການດີຈິຕອນຕ່າງໆ ພ້ອມທັງຮັບປະກັນໃຫ້ມີຄວາມປອດໄພ ແລະ ເຊື່ອມໂຍງກັນໄດ້;
7. ຄຸ້ມຄອງ, ພັດທະນາ, ຈັດສັນ, ຕິດຕາມ ແລະ ກວດກາ ການນຳໃຊ້ຊັບພະຍາກອນໄປສະນີ, ໂທລະຄົມມະນາຄົມ, ເຕັກໂນໂລຊີດີຈິຕອນ, ເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ, ອິນເຕີເນັດ ແລະ ເຕັກໂນໂລຊີ-ນະວັດຕະກຳ ຢ່າງມີປະສິດທິພາບ; ຄຸ້ມຄອງ ແລະ ພັດທະນາວຽກງານຄົ້ນຄວາມຖີ່ວິທະຍຸສື່ສານ ແລະ ການສື່ສານຜ່ານດາວທຽມ ໃຫ້ສອດຄ່ອງກັບກົດໝາຍ, ລະບຽບການ ແລະ ສົນຍາສົນທິສັນຍາທີ່ ສປປ ລາວ ເປັນພາຄີ;
8. ພັດທະນາ, ຄຸ້ມຄອງ ແລະ ຊຸກຍູ້ສົ່ງເສີມການນຳໃຊ້ລະບົບບໍລິຫານ ແລະ ບໍລິການລັດດ້ວຍເຕັກໂນໂລຊີດີຈິຕອນ ໃຫ້ທັນສະໄໝ ແລະ ມີມາດຕະຖານດຽວກັນ ເປັນຕົ້ນ ລະບົບຕົວເມືອງທັນສະໄໝ, ລະບົບເຄືອຂ່າຍພາກລັດ, ລະບົບເຊື່ອມໂຍງ ແລະ ຂໍ້ມູນພາກລັດ, ລະບົບປະຕູຖານຂໍ້ມູນແຫ່ງຊາດ, ລະບົບຢັ້ງຢືນຕົວຕົນດີຈິຕອນ, ລະບົບບໍລິຫານຫ້ອງການ, ລະບົບກອງປະຊຸມທາງໄກ, ລະບົບບໍລິການລັດແບບດີຈິຕອນ ແລະ ລະບົບບໍລິການສັງຄົມທີ່ທັນສະໄໝອື່ນໆ;
9. ສົ່ງເສີມການຫັນເປັນເສດຖະກິດດີຈິຕອນ, ການຫັນເປັນອຸດສະຫະກຳ ແລະ ທັນສະໄໝ ຂອງການຄຸ້ມຄອງ, ການຜະລິດ, ການຄ້າ ແລະ ການບໍລິການ ໂດຍເປັນແກນກາງໃຫ້ແກ່ທຸກພາກສ່ວນໃນການພັດທະນາເຕັກໂນໂລຊີດີຈິຕອນ;